**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ນາຍົກລັດຖະມົນຕີ

ເລກທີ 550 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 01 / 09 / 25

# ດຳລັດ
# ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງການປັບປຸງກົງຈັກການຈັດຕັ້ງຂອງລັດຖະບານ ສະບັບເລກທີ 05/ສພຊ, ລົງວັນທີ 20 ມີນາ 2025;
- ອີງຕາມ ໜັງສືສະເໜີຂອງ ຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 412/ຄຈສພ, ລົງວັນທີ 25 ສິງຫາ 2025.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງກະຊວງອຸດສາຫະກຳ ແລະ ການຄ້າ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ, ລະບຽບການຂອງລັດ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ໃນການຄຸ້ມຄອງ, ກວດກາ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາວຽກງານອຸດສາຫະກຳ, ການເຊື່ອມໂຍງທາງດ້ານເສດຖະກິດ ແລະ ການຄ້າ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກະຊວງອຸດສາຫະກຳ ແລະ ການຄ້າ ຂຽນເປັນຕົວອັກສອນຫຍໍ້ວ່າ: “ອຄ” ຂຽນເປັນພາສາອັງກິດ Ministry of Industry and Commerce ຂຽນຫຍໍ້ວ່າ: “MOIC” ແມ່ນ ກົງຈັກການຈັດຕັ້ງໜຶ່ງ ຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກລວມສູນ ຂົງເຂດວຽກງານ ອຸດສາຫະກຳ, ພະລັງງານ, ບໍ່ແຮ່ ແລະ ການຄ້າ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ກະຊວງອຸດສາຫະກຳ ແລະ ການຄ້າ ມີໜ້າທີ່ ດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດຂອງປະທານປະເທດ, ດຳລັດ, ມະຕິຂອງລັດຖະບານ ແລະ ນາຍົກລັດຖະມົນຕີ;
2. ຄົ້ນຄວ້າ, ເຊື່ອມຊຶມ ແລະ ຫັນເອົາແນວທາງນະໂຍບາຍຂອງພັກ ແລະ ມະຕິຕົກລົງຂອງລັດຖະບານມາເປັນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການລະອຽດຂອງກະຊວງ ເພື່ອນຳສະເໜີລັດຖະບານພິຈາລະນາ, ພ້ອມທັງ ນຳພາ-ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນ ການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ປະກົດຜົນເປັນຈິງ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ແຜນພັດທະນາ, ກົດໝາຍ ແລະ ນິຕິກຳ ກ່ຽວກັບວຽກງານອຸດສາຫະກຳ ແລະ ການຄ້າ ໃຫ້ພາກສ່ວນກ່ຽວຂ້ອງ ແລະ ທົ່ວສັງຄົມ ຮັບຊາບຢ່າງທົ່ວເຖິງ;
4. ສົ່ງເສີມ, ພັດທະນາ ແລະ ຄຸ້ມຄອງ ວຽກງານອຸດສາຫະກຳປຸງແຕ່ງທຸກປະເພດ, ເຂດ ແລະ ນິຄົມອຸດສາຫະກຳ ເປັນຕົ້ນ ວຽກງານສະຖິຕິອຸດສາຫະກຳ, ການສ້າງຕັ້ງໂຮງງານ ແລະ ການດຳເນີນກິດຈະການໂຮງງານ, ການຄຸ້ມຄອງເຄື່ອງຈັກ, ຄຸ້ມຄອງສິ່ງແວດລ້ອມ ແລະ ຄວາມປອດໄພອຸດສາຫະກຳ, ຄຸ້ມຄອງສິ່ງເສດເຫຼືອອັນຕະລາຍ, ສົ່ງເສີມການຜະລິດທີ່ສະອາດ ແລະ ອຸດສາຫະກຳສີຂຽວ;
5. ຄຸ້ມຄອງ ວຽກງານເຄມີ ເປັນຕົ້ນ ການຈົດທະບຽນເຄມີ, ການອະນຸຍາດນຳເຂົ້າ-ສົ່ງອອກ, ສົ່ງຜ່ານເຄມີ, ເກັບກຳຂໍ້ມູນ ແລະ ວິໄຈທາດເຄມີ ແລະ ຄຸ້ມຄອງເຄມີອຸດສາຫະກຳ;
6. ຄຸ້ມຄອງລວມສູນວຽກງານພະລັງງານ ເປັນຕົ້ນ ຄົ້ນຄວ້າກຳນົດລະບຽບການ, ມາດຕະຖານເຕັກນິກ ລວມທັງ ຄຸ້ມຄອງ, ຕິດຕາມ, ກວດກາ ໂຄງການ, ກິດຈະການ ແລະ ທຸລະກິດດ້ານພະລັງງານ; ກຳນົດໂຄງສ້າງລາຄາພະລັງງານ; ຄຸ້ມຄອງບັງຄັບໃຊ້ມາດຕະຖານເຕັກນິກ ແລະ ລະບຽບການ; ຮັບຮອງການສຶກສາສຳຫຼວດ, ອອກແບບ; ຢັ້ງຢືນການກໍ່ສ້າງສຳເລັດ, ແຜນດຳເນີນງານບຳລຸງຮັກສາ, ແຜນຮັບມືສຸກເສີນ; ສ້າງຫົວໜ່ວຍລາຄາກາງຂອງໂຄງການດ້ານພະລັງງານ, ລວມທັງ ຊີ້ນຳກອງເລຂາຄະນະກຳມະການແຫ່ງຊາດ ວ່າດ້ວຍຄວາມປອດໄພຂອງເຂື່ອນ ແລະ ສ້າງນະໂຍບາຍຮັບປະກັນຄວາມໝັ້ນຄົງທາງດ້ານພະລັງງານຂອງປະເທດ;
7. ຄຸ້ມຄອງ ກ່ຽວກັບ ວຽກງານທໍລະນີສາດ-ບໍ່ແຮ່ ເປັນຕົ້ນ ການສຶກສາ, ຄົ້ນຄວ້າທໍລະນີສາດ,ທໍລະນີໄພພິບັດ, ທໍລະນີທ່ອງທ່ຽວ; ການຊອກຄົ້ນ ແລະ ສຳຫຼວດແຮ່ທາດໂລຫະ, ແຮ່ທາດອະໂລຫະ, ແຮ່ທາດພະລັງງານເຊື້ອໄຟ, ນ້ຳແຮ່ທາດ, ແຮ່ທາດກຳມັນຕະລັງສີ, ນ້ຳມັນ ແລະ ອາຍແກັດທຳມະຊາດ; ການສ້າງແຜນທີ່ທໍລະນີສາດ-ແຮ່ທາດ; ຢັ້ງຢືນປະລິມານຊັບພະຍາກອນແຮ່ທາດ ແລະ ສະສົມແຮ່ທາດ, ການສຶກສາຄວາມເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ, ຂຸດຄົ້ນ, ປຸງແຕ່ງ-ຫຼໍ່ຫຼອມ; ຈຳໜ່າຍ, ນຳເຂົ້າ, ສົ່ງຜ່ານ, ຂົນສົ່ງແຮ່ທາດ ແລະ ຜະລິດຕະພັນແຮ່ທາດ; ການປິດບໍ່ແຮ່ ແລະ ການສົ່ງຄືນເນື້ອທີ່ເຂດບໍ່ແຮ່ ແລະ ກວດກາ ແລະ ການລົງທຶນໃນຂົງເຂດທໍລະນີສາດ ແລະ ບໍ່ແຮ່;
8. ຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາ ຕະຫຼາດ ແລະ ການຈຳໜ່າຍສິນຄ້າ ແລະ ບໍລິການ, ການຄ້າທາງເອເລັກໂຕຣນິກ, ຄຸ້ມຄອງລາຄາສິນຄ້າ ແລະ ບໍລິການ, ທຸລະກິດນ້ຳມັນເຊື້ອໄຟ ແລະ ອາຍແກັສ, ສະມາຄົມເສດຖະກິດ, ກຸ່ມ-ສະຫະກອນການຄ້າ, ສະພາການຄ້າຕ່າງປະເທດ ປະຈຳ ສປປ ລາວ, ການປົກປ້ອງສິດຜົນປະໂຫຍດຂອງຜູ້ຊົມໃຊ້, ການສົ່ງເສີມການແຂ່ງຂັນທາງທຸລະກິດ ແລະ ການກວດກາການຄ້າ;
9. ຄຸ້ມຄອງວຽກງານການນຳເຂົ້າ, ສົ່ງອອກ, ສົ່ງຜ່ານສິນຄ້າ, ການອຳນວຍຄວາມສະດວກທາງດ້ານການຄ້າ ລວມທັງ ເປັນກອງເລຂາຄະນະອຳນວຍຄວາມສະດວກທາງດ້ານການຄ້າ ແລະ ການຂົນສົ່ງແຫ່ງຊາດ; ຄຸ້ມຄອງວຽກງານມາດຕະການທາງດ້ານການຄ້າທີ່ບໍ່ແມ່ນພາສີ, ວຽກງານສູນຂໍ້ມູນຂ່າວສານທາງດ້ານການຄ້າ ຂອງ ສປປ ລາວ, ວຽກງານແຫຼ່ງກຳເນີດສິນຄ້າ; ວຽກງານສົ່ງເສີມການຄ້າ, ການຂະຫຍາຍຕະຫຼາດຕ່າງປະເທດ, ການວາງສະແດງສິນຄ້າ, ການຈັບຄູ່ທຸລະກິດ ແລະ ການສ້າງຄວາມເຂັ້ມແຂງໃຫ້ຜູ້ສົ່ງອອກ;

10. ເຈລະຈາ, ຮ່ວມມື ແລະ ເຊື່ອມໂຍງອຸດສາຫະກຳ ແລະ ການຄ້າ ຂອງ ສປປ ລາວ ກັບສາກົນ ລວມທັງເປັນຈຸດປະສານງານ ແລະ ກອງເລຂາວຽກງານອົງການການຄ້າໂລກ, ເສົາຄ້ຳປະຊາຄົມເສດຖະກິດອາຊຽນ ແລະ ວຽກງານເຊື່ອມໂຍງເສດຖະກິດກັບສາກົນ, ຄົ້ນຄວ້າມາດຕະການປົກປ້ອງ ແລະ ແກ້ໄຂທາງການຄ້າສາກົນ, ວຽກງານທີ່ປຶກສາເສດຖະກິດ-ການຄ້າ ປະຈຳຢູ່ຕ່າງປະເທດ;
11. ສຶກສາ, ຄົ້ນຄວ້າໃຫ້ຄຳເຫັນການເຂົ້າຮ່ວມເປັນພາຄີຂອງສົນທິສັນຍາ ແລະ ສັນຍາສາກົນ ທີ່ຕິດພັນກັບພາລະບົດບາດຂອງກະຊວງ ພ້ອມທັງເປັນເຈົ້າການໃນການຈັດຕັ້ງປະຕິບັດພັນທະຕໍ່ສົນທິສັນຍາ ແລະ ສັນຍາສາກົນ;
12. ຄຸ້ມຄອງການຊ່ວຍເຫຼືອຂອງຕ່າງປະເທດໃນຂະແໜງອຸດສາຫະກຳ ແລະ ການຄ້າ ພ້ອມທັງ ຊຸກຍູ້ການເຄື່ອນໄຫວຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ເປັນຈຸດປະສານງານລະຫວ່າງພາກລັດ ແລະ ພາກທຸລະກິດລາວ;
13. ຄຸ້ມຄອງ ແລະ ປົກປ້ອງ ສິດທາງດ້ານຊັບສິນທາງປັນຍາ, ຊຸກຍູ້, ສົ່ງເສີມ ຫົວຄິດປະດິດສ້າງ, ການປະດິດຄິດແຕ່ງ, ແນວຄວາມຄິດການລິເລີ່ມ, ເສດຖະກິດພູມປັນຍາ, ວິທະຍາສາດ, ເຕັກໂນໂລຊີ, ນະວັດຕະກຳ, ການຖ່າຍທອດເຕັກໂນໂລຊີ ແລະ ສ້າງມູນຄ່າເພີ່ມ ຂອງສິນຄ້າ ແລະ ການບໍລິການ, ຮັບປະກັນຜົນປະໂຫຍດອັນຊອບທຳ ແລະ ແກ້ໄຂຂໍ້ຂັດແຍ່ງທາງດ້ານຊັບສິນທາງປັນຍາ ລວມທັງການຮ່ວມມື ທາງດ້ານຊັບສິນທາງປັນຍາ;
14. ຄຸ້ມຄອງວຽກງານມາດຕະຖານ ແລະ ວັດແທກ, ລວມທັງ ການກວດທຽບ, ກວດຄືນ, ທົດສອບ, ແລະ ຢັ້ງຢືນດ້ານມາດຕະຖານ ແລະ ວັດແທກ ຕໍ່ຜະລິດຕະພັນສິນຄ້າ ທີ່ຜະລິດ, ນຳເຂົ້າ, ສົ່ງອອກ ແລະ ຈຳໜ່າຍ ຢູ່ ສປປ ລາວ, ເປັນໃຈກາງຄົ້ນຄວ້າກຳນົດມາດຕະຖານແຫ່ງຊາດຂອງສິນຄ້າ ແລະ ບໍລິການ ແລະ ວຽກງານສິ່ງກີດຂວາງທາງດ້ານເຕັກນິກຕໍ່ການຄ້າພາຍໃຕ້ສົນທິສັນຍາການຄ້າ;
15. ຄຸ້ມຄອງວິສາຫະກິດ ເປັນຕົ້ນ ວຽກງານທະບຽນວິສາຫະກິດ, ການສ້າງສະພາບແວດລ້ອມເອື້ອອຳນວຍແກ່ການປະກອບທຸລະກິດ, ການຄຸ້ມຄອງ ການເຄື່ອນໄຫວຂອງວິສາຫະກິດລັດລົງທຶນ ແລະ ການປະຕິຮູບລັດວິສາຫະກິດທີ່ຂຶ້ນກັບກະຊວງ, ການເຈລະຈາ, ຄຸ້ມຄອງຕິດຕາມ ການຈັດຕັ້ງປະຕິບັດສັນຍາໃນການພັດທະນາໂຄງການ ແລະ ກິດຈະການ ໃນຂະແໜງການອຸດສາຫະກຳ ແລະ ການຄ້າ ລວມທັງວຽກງານປະເມີນການປະຕິບັດກົດໝາຍ, ລະບຽບການ, ສັນຍາທີ່ວິສາຫະກິດມີກັບລັດຖະບານ;
16. ຄຸ້ມຄອງ, ສົ່ງເສີມ ຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (ຈນກ) ກ່ຽວກັບວຽກງານພັດທະນາ ຈນກ, ວຽກງານສົ່ງເສີມຜູ້ປະກອບກິດຈະການ ແລະ ສະຕາດອັບ, ວຽກງານຜະລິດຕະພາບ ແລະ ຄຸນນະພາບ, ວຽກງານພັດທະນາສິນຄ້າ, ວຽກງານຫັດຖະກຳ ແລະ ວຽກງານການເຂົ້າເຖິງແຫຼ່ງທຶນຂອງ ຈນກ; ຄຸ້ມຄອງ, ກວດກາ ກອງທຶນສົ່ງເສີມ ຈນກ ແລະ ເປັນ ຄະນະຈັດຕັ້ງປະຕິບັດຂອງກອງທຶນສົ່ງເສີມການຜະລິດສິນຄ້າລາວ; ເປັນອົງການຜະລິດຕະພາບແຫ່ງ ສປປ ລາວ;
17. ຄົ້ນຄວ້າ, ວິເຄາະວິໄຈ ເພື່ອການວາງ ແລະ ທົບທວນນະໂຍບາຍ ແລະ ຍຸດທະສາດການພັດທະນາຂະແໜງອຸດສາຫະກຳ ແລະ ການຄ້າ ຕາມພາລະບົດບາດຂອງກະຊວງ; ຝຶກອົບຮົມດ້ານວິຊາການໃຫ້ພະນັກງານ-ລັດຖະກອນ ທົ່ວຂະແໜງອຸດສາຫະກຳ ແລະ ການຄ້າ; ຄົ້ນຄວ້າວິທະຍາສາດ, ເຕັກໂນໂລຊີ ແລະ ເຜີຍແຜ່ ການນຳໃຊ້ວິທະຍາສາດ, ວິທະຍາການໃໝ່, ເຕັກນິກວິຊາການ ໃນຂົງເຂດອຸດສາຫະກຳ ແລະ ການຄ້າ ລວມທັງການບໍລິການດ້ານວິຊາການກ່ຽວຂ້ອງໃຫ້ແກ່ສັງຄົມ; ພ້ອມທັງຊີ້ນຳ, ຄຸ້ມຄອງ ແລະ ພັດທະນາວິທະຍາໄລການຄ້າ;
18. ຕິດຕາມ, ກວດກາ, ຊຸກຍູ້ ອົງການຈັດຕັ້ງລັດ, ວິສາຫະກິດ, ພະນັກງານ-ລັດຖະກອນ, ພະນັກງານລັດວິສາຫະກິດ ທີ່ຂຶ້ນກັບການຄຸ້ມຄອງຂອງກະຊວງ ໃນການປະຕິບັດນະໂຍບາຍ, ລະບຽບກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາ, ແຜນວຽກຈຸດສຸມ ແລະ ບູລິມະສິດ, ການປະຕິບັດພາະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ; ການປະຕິບັດລະບຽບການເຕັກນິກວິຊາສະເພາະ ແລະ ຫຼັກການຄຸ້ມຄອງຂອງຂະແໜງການ; ຕິດຕາມ, ກວດກາຄຳຮ້ອງ-ຄຳສະເໜີ, ວຽກງານສະກັດກັ້ນ, ຕ້ານການສໍ້ລາດບັງຫຼວງ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ;

19. ຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງ, ປັບປຸງພາລະບົດບາດ, ກໍານົດຕໍາແໜ່ງງານ, ຂຶ້ນແຜນກໍ່ສ້າງ-ບໍາລຸງ ຍົກລະດັບ ໃຫ້ແກ່ພະນັກງານ-ລັດຖະກອນ ໃຫ້ສາມາດຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ຂອງ ໜ້າທີ່ວຽກງານ ແລະ ຄຸ້ມຄອງຕິດຕາມກວດກາ, ປະເມີນຜົນ, ບັນຈຸ, ສັບຊ້ອນ, ນໍາໃຊ້, ປະຕິບັດ ນະໂຍບາຍ ແລະ ວິໄນຕໍ່ພະນັກງານ-ລັດຖະກອນ ຂອງຂະແໜງອຸດສາຫະກໍາ ແລະ ການຄ້າ ຕາມກົດໝາຍ ແລະ ລະບຽບການ;
20. ສ້າງ, ພັດທະນາ ແລະ ສົ່ງເສີມການຫັນເປັນຕິຈິຕອນ ໃນຂະແໜງອຸດສາຫະກໍາ ແລະ ການຄ້າ ທີ່ຕິດພັນ ກັບພາລະບົດບາດຂອງກະຊວງ ໂດຍນໍາໃຊ້ເຕັກໂນໂລຊີທັນສະໄໝ ແລະ ລະບົບຄອມພິວເຕີ ແລະ ສ້າງຖານຂໍ້ມູນຂ່າວສານ;
21. ຄຸ້ມຄອງຊັບສິນບັດຂອງລັດ, ການນໍາໃຊ້ງົບປະມານຂອງກະຊວງ, ພ້ອມທັງຂຶ້ນແຜນໂຄງການ ລວມທັງ ໂຄງການລົງທຶນຂອງລັດ, ງົບປະມານ ແລະ ສະຫຼຸບລາຍງານ ຕາມກົດໝາຍ ແລະ ລະບຽບການ;
22. ຊີ້ນໍາ ແລະ ຄຸ້ມຄອງການຈັດຕັ້ງປະຕິບັດວຽກງານທາງດ້ານວິຊາການ ຂອງຂະແໜງການຕົນຢູ່ຂັ້ນ ທ້ອງຖິ່ນ ໂດຍມີການແບ່ງຂັ້ນ, ແບ່ງຄວາມຮັບຜິດຊອບ ແລະ ສິດຕົກລົງບັນຫາ ຕາມກົດໝາຍ ແລະ ລະບຽບການ;
23. ຕິດຕາມ, ຊຸກຍູ້, ສະຫຼຸບສັງລວມ ແລະ ລາຍງານສະພາບການຈັດຕັ້ງປະຕິບັດວຽກງານຂອງຂະແໜງການຕົນ ຕໍ່ລັດຖະບານ, ນາຍົກ-ຮອງນາຍົກລັດຖະມົນຕີ ຜູ້ຊີ້ນໍາຂົງເຂດວຽກງານຂະແໜງອຸດສາຫະກໍາ ແລະ ການຄ້າ;
24. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງ ລັດຖະບານ.

**ມາດຕາ 4 ຂອບເຂດສິດ**

ຂອງກະຊວງອຸດສາຫະກໍາ ແລະ ການຄ້າ ມີຂອບເຂດສິດ ດັ່ງນີ້:

1. ສະເໜີສ້າງ, ປັບປຸງ ຫຼື ຍົກເລີກກົດໝາຍ, ລັດຖະບັນຍັດ, ດໍາລັດ ທີ່ກ່ຽວຂ້ອງກັບວຽກງານຂະແໜງ ອຸດສາຫະກໍາ ແລະ ການຄ້າ ຕໍ່ລັດຖະບານ;
2. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ເພື່ອຄຸ້ມຄອງບໍລິຫານລັດ ໃນຂະແໜງອຸດສາຫະ ກໍາ ແລະ ການຄ້າ;
3. ຢຸດການປະຕິບັດ, ລົບລ້າງ ຫຼື ຍົກເລີກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ຂອງອົງ ການຈັດຕັ້ງຂັ້ນລຸ່ມ ທີ່ຂຶ້ນກັບຂະແໜງອຸດສາຫະກໍາ ແລະ ການຄ້າ ແລະ ສະເໜີລັດຖະບານ ປັບປຸງ, ຢຸດການປະຕິບັດ, ລົບລ້າງ ຫຼື ຍົກເລີກ ນິຕິກໍາ ຂອງຂະແໜງການອື່ນ ຫຼື ອົງການປົກຄອງທ້ອງຖິ່ນ ທີ່ ຂັດກັບລະບຽບການ ຫຼື ຂັດກັບກົດໝາຍທີ່ປະກາດໃຊ້ແລ້ວ;
4. ອອກ, ໂຈະ, ຖອນ, ລົບລ້າງ ໃບອະນຸຍາດດໍາເນີນທຸລະກິດ, ໃບຢັ້ງຢືນເຕັກນິກ ແລະ ໃບອະນຸຍາດ ກ່ຽວຂ້ອງ ໃນຂົງເຂດອຸດສາຫະກໍາ ແລະ ການຄ້າ ທີ່ຢູ່ໃນພາລະບົດບາດຂອງກະຊວງ ຕາມກົດໝາຍ ແລະ ລະບຽບການ;
5. ພົວພັນ, ຮ່ວມມືກັບຕ່າງປະເທດ, ເຈລະຈາ ແລະ ລົງນາມໃນສົນທິສັນຍາ ແລະ ສັນຍາກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມພາລະບົດບາດ ແລະ ຕາມການມອບໝາຍຂອງລັດຖະບານ;
6. ພິຈາລະນາເພື່ອແກ້ໄຂຄໍາຮ້ອງ-ຄໍາສະເໜີ ທີ່ຕິດພັນກັບຂະແໜງອຸດສາຫະກໍາ ແລະ ການຄ້າ ພ້ອມທັງ ໃຫ້ຄໍາປຶກສາທາງດ້ານນະໂຍບາຍ, ວິຊາການ ແລະ ກົດໝາຍ ແກ່ບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;
7. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຢູ່ສູນກາງ ແລະ ທ້ອງຖິ່ນ ເພື່ອຮ່ວມມືໃນການປະຕິບັດ ພາລະບົດບາດ, ໜ້າທີ່ ຂອງຂະແໜງອຸດສາຫະກໍາ ແລະ ການຄ້າ ຕາມກົດໝາຍ ແລະ ລະບຽບການ;
8. ກວດກາການຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ນິຕິກໍາ ຂອງຂະແໜງອຸດສາຫະກໍາ ແລະ ການຄ້າ;
9. ສະເໜີສ້າງຕັ້ງ, ປັບປຸງ ຫຼື ຍຸບເລີກ ກົງຈັກຫົວໜ່ວຍວິຊາການຂັ້ນກົມ, ສະເໜີສ້າງຕັ້ງຫ້ອງການ ຫຼື ແຕ່ງຕັ້ງຜູ້ຕາງໜ້າຂອງກະຊວງອຸດສາຫະກໍາ ແລະ ການຄ້າ ໄປປະຈໍາການຢູ່ຕ່າງປະເທດ;

10. ກຳນົດພາລະບົດບາດ, ກົງຈັກການຈັດຕັ້ງ, ຕຳແໜ່ງງານ ແລະ ມາດຕະຖານຕຳແໜ່ງງານ ໃນໂຄງປະກອບກົງຈັກການຈັດຕັ້ງ ຂອງກະຊວງ ແລະ ກົງຈັກການຈັດຕັ້ງດ້ານວິຊາການ ຢູ່ຂັ້ນທ້ອງຖິ່ນ;
11. ຕົກລົງແຕ່ງຕັ້ງ, ປົດຕຳແໜ່ງ, ຍົກຍ້າຍ, ບັນຈຸ, ສັບຊ້ອນ, ນຳໃຊ້, ບຳລຸງກໍ່ສ້າງ, ຍ້ອງຍໍ, ປະຕິບັດນະໂຍບາຍ, ປະຕິບັດວິໄນ ຕໍ່ພະນັກງານ-ລັດຖະກອນ ຂອງຂະແໜງອຸດສາຫະກຳ ແລະ ການຄ້າ ຕາມກົດໝາຍ ແລະ ລະບຽບການ;
12. ຄຸ້ມຄອງ, ນຳໃຊ້ງົບປະມານ, ຊັບສິນຂອງລັດ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ຕາມກົດໝາຍ ແລະ ລະບຽບການ ແລະ ວາງມາດຕະການອັນຈຳເປັນ ເພື່ອປະຕິບັດແຜນການປະຈຳປີ ຂອງຕົນ;
13. ສະເໜີລັດຖະບານ ຍ້ອງຍໍ ການຈັດຕັ້ງ ຫຼື ບຸກຄົນ ທີ່ມີຜົນງານດີເດັ່ນ ໃນການປະກອບສ່ວນພັດທະນາວຽກງານອຸດສາຫະກຳ ແລະ ການຄ້າ;
14. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກຂອງກະຊວງອຸດສາຫະກຳ ແລະ ການຄ້າ ປະກອບມີ:

1. ຫ້ອງການ;
2. ກົມຈັດຕັ້ງ;
3. ກົມກວດກາ;
4. ກົມນະໂຍບາຍ, ແຜນພັດທະນາ ແລະ ປະເມີນຜົນ;
5. ກົມອຸດສາຫະກຳປຸງແຕ່ງ;
6. ກົມພະລັງງານ;
7. ກົມທໍລະນີສາດ ແລະ ບໍ່ແຮ່;
8. ກົມເຈລະຈາ ແລະ ຮ່ວມມືສາກົນ;
9. ກົມການຄ້າພາຍໃນ;
10. ກົມການຄ້າຕ່າງປະເທດ;
11. ກົມຊັບສິນທາງປັນຍາ;
12. ກົມມາດຕະຖານ ແລະ ວັດແທກ;
13. ກົມຄຸ້ມຄອງວິສາຫະກິດ;
14. ກົມສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ;
15. ສະຖາບັນອຸດສາຫະກຳ, ການຄ້າ ແລະ ພະລັງງານ.

ກະຊວງອຸດສາຫະກຳ ແລະ ການຄ້າ ມີກົງຈັກການຈັດຕັ້ງດ້ານວິຊາການຂອງຕົນຢູ່ຂັ້ນທ້ອງຖິ່ນ ຕາມເງື່ອນໄຂ, ຄວາມເໝາະສົມ ແລະ ຄວາມພ້ອມຂອງແຕ່ລະທ້ອງຖິ່ນ ແລະ ຕາມການຕົກລົງຂອງອົງການປົກຄອງທ້ອງຖິ່ນ ບົນພື້ນຖານຄວາມເປັນເອກະພາບກັບກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຄະນະຈັດຕັ້ງສູນກາງພັກ.

### ມາດຕາ 6 ໂຄງປະກອບບຸກຄະລາກອນ

ບຸກຄະລາກອນຂອງກະຊວງອຸດສາຫະກຳ ແລະ ການຄ້າ ປະກອບດ້ວຍ:

1. ລັດຖະມົນຕີກະຊວງ 01 ທ່ານ ຮັບຜິດຊອບຕໍ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະ ມົນຕີ ຜູ້ຊີ້ນຳຂົງເຂດວຽກງານອຸດສາຫະກຳ ແລະ ການຄ້າ ໃນການຄຸ້ມຄອງມະຫາພາກຕາມການຄຸ້ມຄອງ ຂອງຂະແໜງການຕົນຮັບຜິດຊອບ ຊຶ່ງມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າ

ດ້ວຍລັດຖະບານ. ໃນເວລາຕິດຂັດ ລັດຖະມົນຕີກະຊວງ ຕ້ອງມອບສິດໃຫ້ຮອງລັດຖະມົນຕີທ່ານໃດທ່ານໜຶ່ງ ເປັນຜູ້ຮັກສາການແທນ;

2. ຮອງລັດຖະມົນຕີຈຳນວນໜຶ່ງ ຊ່ວຍລັດຖະມົນຕີກະຊວງ ໃນການຊີ້ນຳວຽກງານຂອງກະຊວງ ໂດຍຮັບຜິດຊອບລົງເລິກຊ່ວຍຊີ້ນຳວຽກງານ ຕາມການມອບໝາຍຂອງລັດຖະມົນຕີກະຊວງ;
3. ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າສະຖາບັນ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າສະຖາບັນ, ທີ່ປຶກສາເສດຖະກິດ-ການຄ້າ ແລະຜູ້ຕາງໜ້າປະຈຳຢູ່ຕ່າງປະເທດ, ຫົວໜ້າພະແນກ, ຫົວໜ້າສູນ, ຮອງຫົວໜ້າພະແນກ, ຮອງຫົວໜ້າສູນ ແລະ ລັດຖະກອນວິຊາການ ຕາມກຳນົດຕຳແໜ່ງງານ. ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 7 ຫຼັກການ

ກະຊວງອຸດສາຫະກຳ ແລະ ການຄ້າ ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ໃນບັນຫາທີ່ສຳຄັນ ພົວພັນເຖິງຜົນປະໂຫຍດອັນໃຫຍ່ຫຼວງຂອງຊາດ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ, ປຸກລະດົມກຳລັງແຮງດ້ານສະຕິປັນຍາ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງລວມໝູ່ ແລະ ບຸກຄົນ ເພື່ອປະຕິບັດໜ້າທີ່ການເມືອງທີ່ໄດ້ຮັບມອບໝາຍ ໃຫ້ມີຜົນສຳເລັດ;
3. ເຄົາລົບ ແລະ ປະຕິບັດກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ, ທຸກການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ກົດໝາຍ, ລະບຽບການ, ປະຕິບັດສິດ ໜ້າທີ່ຕາມການມອບໝາຍດ້ວຍຄວາມຮັບຜິດຊອບ ແລະ ຫຼັກການລວມຂອງລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 8 ແບບແຜນວິທີເຮັດວຽກ

ກະຊວງອຸດສາຫະກຳ ແລະ ການຄ້າ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ ແລະ ໂຄງການ ຢ່າງມີຈຸດສຸມ, ມີການກຳນົດຄາດໝາຍ, ເປົ້າໝາຍ ແລະ ຕົວຊີ້ວັດຜົນສຳເລັດ ໃນແຕ່ລະໄລຍະ;
2. ເຮັດວຽກມີການກວດກາ, ຕິດຕາມ, ຊຸກຍູ້, ປະເມີນຜົນ ແລະ ຖອດຖອນບົດຮຽນ ຜ່ານລະບອບປະຊຸມປະຈຳເດືອນ, ປະຈຳໄຕມາດ, ປະຈຳປີ ຫຼື ກອງປະຊຸມວິຊາການ ພ້ອມທັງ ມີການສະຫຼຸບລາຍງານລັດຖະບານ ເປັນແຕ່ລະໄລຍະ;
3. ປະສານງານ ແລະ ສົມທົບຢ່າງແໜ້ນແຟ້ນກັບທຸກຂະແໜງການທັງສູນກາງ, ທ້ອງຖິ່ນ ແລະ ອົງການຈັດຕັ້ງຕ່າງໆ ຕາມພາລະບົດບາດ, ສິດ, ໜ້າທີ່ ແລະ ຕາມການມອບໝາຍຂອງລັດຖະບານ ຫຼື ນາຍົກລັດຖະມົນຕີ ແນໃສ່ໝູນໃຊ້ກຳລັງແຮງຂອງທຸກພາກສ່ວນ ເພື່ອພັດທະນາ ຂະແໜງອຸດສາຫະກຳ ແລະ ການຄ້າ;
4. ປະຕິບັດການພົວພັນປະສານງານ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງຕາມລະບຽບຫຼັກການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

### ມາດຕາ 9 ງົບປະມານ ແລະ ຕາປະທັບ

ກະຊວງອຸດສາຫະກຳ ແລະ ການຄ້າ ມີງົບປະມານ, ຕາປະທັບ ແລະ ການໝາຍ ຂອງຕົນ ເພື່ອຮັບໃຊ້ເຄື່ອນໄຫວວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ.

**ມາດຕາ 10 ການເຜີຍແຜ່ຂະຫຍາຍ**

ມອບໃຫ້ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຫ້ອງການ, ບັນດາກົມ, ສະຖາບັນ ແລະ ກົງຈັກການຈັດຕັ້ງດ້ານວິຊາການຂອງທ້ອງຖິ່ນທີ່ຢູ່ພາຍໃຕ້ການຊີ້ນຳດ້ານວິຊາການ ທີ່ກຳນົດໃນມາດຕາ 5 ຂອງດຳລັດສະບັບນີ້ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ, ມອບຄວາມຮັບຜິດຊອບຢ່າງຈະແຈ້ງ, ຮັດກຸມ ແລະ ເໝາະສົມ ໃນອົງການປົກຄອງທ້ອງຖິ່ນ ເພື່ອຮັບໃຊ້ວຽກງານໃຫ້ໄດ້ຮັບຜົນດີ.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ກະຊວງອຸດສາຫະກຳ ແລະ ການຄ້າ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ນຳໃຊ້ ປ່ຽນແທນ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 275/ນຍ, ລົງວັນທີ 01 ກັນຍາ 2023 ແລະ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 624/ນຍ, ລົງວັນທີ 22 ຕຸລາ 2021 ແລະ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**